# ຊີວິດ ແລະ ຜົນງານ ...



ພຣະອາຈານ ດຣ. ມະຫາເທວດ ມະເສໄນ

# ຊີວິດ ແລະຜົນງານ

ຂອງ

## ພຣະອາຈານ ດຣ. ມະຫາເຫວດ ມະເສໄນ

ຮຽບຮຽງ ໂດຍ

ພຣະອາຈານ ບຸນສວນ ປຸນຍະລາໂພ (ແກ້ວພິລົມ)

2012

ຄະນະທີ່ປຶກສາ

1. ພຣະອາຈານ ດຣ.ຊາລີ ກັນຕະສີໂລ.
   - ຮອງປະທານ ອ.ພ.ສ.ສູນກາງ,
   - ຫົວໜ້າກຳມາທິການເຜີຍແຜ່ ສິລະທັມ ແລະວິປັດສະນາກັມມະຖານ,
   - ປະທານ ໂຄງການພຸດທະສາສະໜາ ເພື່ອການພັດທະນາ (ຄພພ)
2. ພຣະອາຈານໃຫຍ່ ວັນນາ ສຸລິຍະວົງສາ ປະທານ ອ.ພ.ສ.ນະຄອນຫຼວງ
3. ພຣະອາຈານ ຄຳມາ ປັນຍາວິຈິດ ຫົວໜ້າຫ້ອງການ ອ.ພ.ສ.ສູນກາງ.

ຄະນະຈັດທຳ

- ບັນນາທິການ ທ່ານ ດຣ.ທອງຄຳ ອ່ອນມະນີສອນ
  ອະດີດ ຫົວໜ້າກົມ ວັນນະຄະດີ
  ແລະ ວັດທະນະທຳ ມະຫາຊົນ.
- ຮຽບຮຽງໂດຍ: ພຣະອາຈານ ບຸນສວນ ບຸນຍະລາໂພ (ແກ້ວພິລົມ)
  ຄະນະປະຈຳ ອ.ພ.ສ.ສູນກາງ
  ແລະ ຜູ້ອຳນວຍການ ວິທະຍາໄລສົງ ອົງຕື້

- ອອກແບບຈັດໜ້າ ທ່ານ ອາຈານ ສຸລັດ ໄຊຍະສິງຫ໌
- ຈຳນວນພິມ 2000 ຫົວ
- ຂະໜາດພິມ 15x20 ຊມ
- ຈຳນວນໜ້າພິມ 92 ໜ້າ
- ເລກທະບຽນພິມ 042ພຈ03022012
- ພິມທີ່ໂຮງພິມ ປະຊາຊົນ

© ສະຫງວນລິຂະສິດ

- ພິມຄັ້ງທີ I
- ປີພິມ ວັນທີ 18 ກຸມພາ 2012
- ອຸປະຖຳໂດຍ: ຍາແມ່ ຈັນສີ ວິລະວຸດ ພ້ອມດ້ວຍລູກຫຼານ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

◇◇◇◇◇◇◇

ກະຊວງຖະແຫລງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ

ກົມພິມຈຳໜ່າຍ

ໂທ : 212422, 223129

ເລກທີ 042/ ພຈ

ນະຄອນຫລວງ ວຽງຈັນ, ວັນທີ 03/02/2012

# ໃບທະບຽນພິມຈຳໜ່າຍ

- ອີງຕາມ ກົດໝາຍວ່າດ້ວຍການພິມຈຳໜ່າຍ ສະບັບເລກທີ 05 / ສພຊ, ລົງວັນທີ 9 / 12/ 2008.
- ອີງຕາມ ຂໍ້ຕົກລົງຂອງລັດຖະມົນຕີ ກະຊວງຖະແຫລງຂ່າວ ແລະ ວັດທະນະທຳ ສະບັບເລກທີ 466 / ຖວ, ລົງວັນທີ 21/ 07/ 2008 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກົມພິມຈຳໜ່າຍ.
- ອີງຕາມໃບຄຳຮ້ອງຂາເຂົ້າສະບັບເລກທີ 042 ລົງວັນທີ 03/02/2012 ຂອງ ພຣະອາຈານ ບຸນສ່ວນ ແກ້ວພິລົມ, ອາຍຸ: 33 ປີ, ອາຊີບ: ນັກບວດ ບ້ານ: ຊຽງຍືນ : ເມືອງ: ຈັນທະບູລີ ນະຄອນຫຼວງວຽງຈັນ ໂທ: 54160337.

## ກົມພິມຈຳໜ່າຍເຫັນດີອະນຸຍາດໃຫ້ພາກສ່ວນກ່ຽວຂ້ອງເພື່ອພິມຈຳໜ່າຍ:

- ຊື່ປຶ້ມ: " ຊີວິດ ແລະ ຜົນງານ ຂອງ ພຣະອາຈານ ດຣ. ມະຫາເຫວດ ມະເສໄນ "
- ພິມຄັ້ງທີ: 1
- ພາສາພິມ: ລາວ
- ອົງການທີ່ຈັດພິມ: ໂຮງພິມ ປະຊາຊົນ
- ຂະໜາດພິມ: 15x20
- ຈຳນວນພິມ: 2.000 ຫົວ
- ຈຳນວນໜ້າພິມ: 92ໜ້າ
- ພິມທີ່: ໂຮງພິມ ປະຊາຊົນ
- ເລກທະບຽນພິມຈຳໜ່າຍ: 042ພຈ 03022012
- ຈຸດປະສົງໃນການພິມ:
- ເອົາໃຈໃສ່:
  - ໃຫ້ໂຮງພິມທີ່ກ່ຽວຂ້ອງພິມຊື່ໂຮງພິມຂອງຕົນຕິດຕາມດ້ວຍລະບົບລະຫັດໃສ່ບ່ອນທີ່ເໝາະສົມຂອງປຶ້ມ ຫລື ສິ່ງພິມກ່ຽວຂ້ອງຕາມເລກທະບຽນນີ້ ຕິດຕາມດ້ວຍວັນທີທີ່ສຳເລັດການພິມ.
  - ພາຍຫລັງພິມສຳເລັດແລ້ວ, ເຈົ້າຂອງປຶ້ມຕ້ອງມອບປຶ້ມດັ່ງນີ້:
    - 03 ເຫລັ້ມ ໃຫ້ກົມພິມຈຳໜ່າຍເພື່ອກວດກາຕາມລະບຽບການ.
    - 05 ເຫລັ້ມ ໃຫ້ຫໍສະໝຸດແຫ່ງຊາດ ເພື່ອປະກອບສ່ວນເຂົ້າໃນການຄົ້ນຄວ້າ, ສົ່ງເສີມການອ່ານ ແລະ ເກັບຮັກສາໄວ້ຍາວນານ.

* ໃຫ້ໝາຍເລກລະຫັດເລກລະຫັດປຶ້ມໃສ່ບ່ອນທີ່ເໝາະສົມ .

ພິມທີ່: ໂຮງພິມ ປະຊາຊົນ

ຕາມທະບຽນ: 042ພຈ 03022012

ຈຳນວນທັງໝົດ: 2.000 ຫົວ

ຕາງ. ຫົວໜ້າກົມພິມຈຳໜ່າຍ

ກະວິນ ຖຽງຄຳຊົມມີ



ພຣະອາຈານ ດຣ. ມະຫາເຫວດ ມະເສໄນ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

-------000------

# ຄຳເຫັນຂອງໂຮງພິມປະຊາຊົນ

ຊີວິດ ແລະ ຜົນງານ ຂອງພຣະອາຈານມະຫາເວດ ມະເສໄນ ພ້ອມທັງບົດເຝິກຫັດ ເທດ ນັບວ່າເປັນອີກໜັງສືເຫລັ້ມໜຶ່ງ ທີ່ມີທັງບົດຮຽນອັນຍອດຢ້ຽມ ແລະ ໃຫ້ຂໍ້ຄິດຄະຕິຄຳ ສອນເປັນ ແວ່ນແຍງໃຫ້ແກ່ລູກສິດ ແລະ ອອກຕົນຍາດໂຍມ ແລະ ພຸດທະສານະນິກະຊົນທົ່ວໄປ ຄວນໄດ້ອ່ານ ແລະ ເຝິກແອບເອົາຈັນຍາ ແລະ ຈາລິຍະວັດຂອງພຣະອາຈານ ເພື່ອເປັນການ ດຳເນີນຊີວິດທີ່ດີເປັນແບບຢ່າງໃຫ້ແກ່ຊາວພຸດທັງຫລາຍ.

ປະເທດລາວເຮົາກໍເປັນປະເທດໜຶ່ງ ທີ່ໄດ້ນັບຖືພຸດທະສາສະນາມາແຕ່ເຫິງນານແລ້ວ ເຊິ່ງມີຮີດຄອງປະເພນີ ແລະ ວັດທະນະທຳອັນດີ ຄືມີການເຮັດບຸນສິນກິນທານ ແລະ ມີຄູບາ ອາຈານເປັນຜູ້ສັ່ງຜູ້ສອນ ເປັນທີ່ເພິ່ງທາງໃຈ ໃນການວ່າກ່າວຕັກເຕືອນ ບອກສອນໃຫ້ຄົນຢູ່ ໃນສັງຄົມຢູ່ຮ່ວມກັນດ້ວຍຄວາມເຄົາລົບກັນໃຫ້ກຽດກັນ ບໍ່ລ່ວງລະເມີດສິດຂອງກັນ ແລະ ກັນ ມີລະບຽບຈິບງານ (ມີສິນ) ມີການເຊື່ອຟັງໂອວາດຄຳສອນຂອງພໍ່-ແມ່ (ກະຕັນຍູກະຕະເວທີ ຕາຄຸນ) ຮູ້ອ່ອນນ້ອມຖ່ອມຕົນ ຮູ້ໃຫ້ອະໄພ ເອື້ອເຟື້ອເພື່ອແຜ່ຮູ້ສິນທຳ ເຮັດໃຫ້ສັງຄົມຮົ່ມ ເຢັນເປັນສຸກ (ຢູ່ຮ່ວມກັນຢ່າງສັນຕິສຸກ) ຈັນຍາມາລະຍາດເຫລົ່ານີ້ລ້ວນແລ້ວແຕ່ຊຶມຊັບມາ ຈາກວັດທັງນັ້ນ.

ໂຮງພິມ ປະຊາຊົນ ພູມໃຈທີ່ສຸດທີ່ໄດ້ພິມປຶ້ມຫົວນີ້ ຂໍມອບກາບບູຊາກຽດຕິຄຸນຂອງ ພຣະອາຈານໃຫຍ່ ແລະ ຂໍມອບເປັນລາງວັນແຫ່ງຊີວິດຂອງພຸດທະສາສະນິກະຊົນທັງຫລາຍ ຜູ້ທີ່ໃຝ່ປາຖະໜາຢາກຈະສຶກສາພຣະທຳຄຳສອນ ເພື່ອນ້ອມນຳມາປະພຶດປະຕິບັດໃຫ້ຊີວິດມີ ຄວາມຈະເລີນງອກງາມ.

ຂໍຂອບໃຈ

ນະຄອນຫລວງວຽງຈັນ, ວັນທີ 2 /2/ 2012

ຜູ້ອຳນວຍການ ໂຮງພິມ ປະຊາຊົນ

ທອງສິດ ຫລ້ຽມໄຊຍະຈັກ

# ຄຳນຳໃນການຈັດພິມ

ປື້ມຊີວິດ ແລະ ຜົນງານ ຂອງ ພຣະອາຈານ ດຣ.ມະຫາເຫວດ ມະເສໄນ, ເຊິ່ງເປັນ ທັງ ບົດຝຶກຫັດເທດສະໜາ ແລະ ບົດເທດ ໃນຕົວຢ່າງຫົວນີ້, ໄດ້ເກັບກຳ ຮວບຮວມ ຈາກ ບົດເທດ, ບົດບັນ ລະຍາຍ ຂອງ ພຣະອາຈານໃຫຍ່ ເພື່ອເປັນ ການ ຕອບ ແທນ ບູຊາຄຸນ ຂອງ ຄູບາ -ອາຈານທີ່ໄດ້ອົບຮົມບົ່ມນິໄສ ໃຫ້ຂໍ້ຄິດ ໃຫ້ທິດທາງ ໃຫ້ຄວາມເມດຕາ ໃຫ້ຄວາມຮູ້ ແລະເພື່ອຕອບສະໜອງ ສັດທາ ໃຫ້ແກ່ອອກຕົນ ຍາດໂຍມ ຜູ້ທີ່ໃຫ້ ຄວາມອຸປະຖຳຄ້ຳຊູ ພຣະສົງ - ສາມະເນນ ແລະຜູ້ທີ່ມີຄວາມສັດທາໃນສິນແລະຈະຣິ ຍະ ວັດ ຂອງ ພຣະອາຈານ ມະຫາເຫວດ ມາຕະຫຼອດ ແລະ ອີກອັນ ໜຶ່ງ ເພື່ອເປັນຂອງຕ້ອນ ໃຫ້ແກ່ ພໍ່ອອກ - ແມ່ອອກ ລູກສິດລູກຫາ ທີ່ມາໃນງານສະຫຼອງ ປະຣິນຍາດຸດສະດີບັນດິດ ກິດຕິມະສັກ ສົມ ໂພດພຣະ ແລະ ສະເຫຼີມສະຫຼອງ ອາຄານຮຽນ ປະຣິຍັດຕິທັມແລະ ກຸຕິ. ເພື່ອໃຫ້ມີຄວາມໝາຍ ໃນວັນດັ່ງກາວຜູ້ຮຽນ ຈຶ່ງໄດ້ຄັດເລືອກຈັດສັນ ເອົາຜົນງານ ຂອງ ພຣະອາຈານຈຳນວນໜຶ່ງ ມາລົງພິມ ແຈກໃນງານນີ້ ແລະຫວັງຢ່າງຍິ່ງວ່າບົດ ຄວາມ ທັມມະ ໃນປື້ມຫົວນີ້ ຄົງຈະເປັນປະໂຫຍດ ແກ່ຜູ້ໃຝ່ຈະສຶກສາ ຄົ້ນຄ້ວາ ຫຼັກທັມ ຄຳສອນ ຂອງພຣະພຸດທະເຈົ້າ ແລະເປັນຄູ່ມືຂອງ ພຣະ-ເນນ ບວດໃໝ່ ອີງທີ່ຢາກເປັນນັກເທດ, ນັກປາຖະກະຖາ ແລະ ນັກບັນລະຍາຍ ເປັນຂັ້ນພື້ນຖານໄດ້.

ອີງໃສ່ສະພາບຂອງສັງຄົມ ໃນປັດຈຸບັນ ຍັງຕ້ອງການທັມມະ ແຕ່ບໍ່ມີເວ ລາພໍ ທີ່ຈະເຂົ້າມາສຶກສາ ພຣະໄຕຼປິດົກເພື່ອຈະນຳ ເອົາ ພຣະທັມນັ້ນໄປປະຕິບັດ ໃນຊີວິດປະຈຳວັນ ຕາມກຳລັງສັດທາ ແລະ ຄວາມສາມາດຂອງຕົນ. ພໍ່ອອກ-ແມ່ອອກ ຫຼາຍທ່ານກໍໄດ້ ສະຫຼະ ເວລາມາວັດໄດ້ ກໍເພາະ ເມື່ອມີງານ ບຸນສົມ ກິນທານເທົ່າ ນັ້ນ ກໍຖືເອົາໂອກາດນີ້ ຟັງທັມຈາກຄູບາ-ອາຈານ ຜູ້ທີ່ໄດ້ຄົ້ນ ຄ້ວາ ສຶກສາຮ່ຳຮຽນ ແລະຄັດຈ້ອນ ເອົາແຕ່ຫົວຂໍ້ທັມ ທີ່ເໝາະສົມແກ່ ຄາລະວາດ ຈະປະພຶດປະຕິບັດໄດ້.

ເພື່ອໃຫ້ພຣະເນນຜູ້ບວດໃໝ່ ໄດ້ມີໂອກາດໄດ້ສຶກສາ ຮ່ຳຮຽນ ແລະ ນຳໄປເຜີຍແຜ່ກໍມີແຕ່ ພຣະອາຈານໃຫຍ່ ມະຫາເຫວດ ມະເສໄນ ເພິ່ນຈະ ຈັດ ໃຫ້ມີທຸກໆປີ ໂດຍສະເພາະໃນເທດສະການເຂົ້າພັນສາ ເພິ່ນເປັນພຣະເຖ ລະຜູ້ໜຶ່ງທີ່ເອົາໃຈໃສ່ ໃນການສ້າງໃຫ້ພຣະໜຸ່ມ ເນນນ້ອຍ ໄດ້ມີໂອກາດ ສ້າງປະສົບການ ໄດ້ຝຶກທັກສະ ເພື່ອເປັນ ກຸນແຈທີ່ສຳ ຄັນ ໃນການດຳເນີນຊີວິດ ນັບວ່າເປັນລາບອັນປະເສີດ ຂອງ ພຣະເນນ ທີ່ໄດ້ມາຝຶກແອບ ເອົາຄວາມຮູ້ ຈາກ ເພິ່ນ.

ຜູ້ຮຽບຮຽງຫວັງວ່າປື້ມ ປະຫວັດແລະຜົນງານ ບົດເທດຈຳນວນ ນີ້ຄົງ ຈະເປັນປະໂຫຍດ ແກ່ຜູ້ອ່ານບໍ່ຫຼາຍກໍໜ້ອຍເພື່ອຈະໄດ້ເອົາໄປເທດແກ່ອອກຕິ ນຍາດໂຍມຟັງ ຕາມກາລະໂອກາດ ໃນງານບຸນຕ່າງໆຜິດພາດ ປະການໃດ

ຜູ້ຂຽນຂໍອະໄພ ເພາະຈັດທຳຂຶ້ນອັນຮີບດ່ວນ ເນື່ອງໃນ ງານສະຫຼອງ ປະຣິນຍາ ດຸສະດີບັນດິດ ກິດຕິມະສັກ, ສົມໂພດພຣະ ແລະ ອາຄານຮຽນ ປະຣິຍັດຕິທັມ ແລະ ກຸຕິ ໃນຄັ້ງ ນີ້ດ້ວຍ

ວັດສີສະເກດ ນະຄອນຫຼວງວຽງຈັນ, ວັນທີ 02 / 02/ 2012

ພຣະອາຈານ ບຸນສວນ ບຸນຍະລາໂພ
( ແກ້ວພິລົມ )

## ຂໍສະແດງຄວາມຍິນດີຕໍ່ຜົນງານ

ອຸດຖານະວະໂຕ ສະຕິມະໂຕ ສຸຈິກັມມັສສະ ນິສັມມະກາຣິໂນ
ສັ້ນຍະຕັສສະຈະ ທັມມະຊີວິໂນ ອັປປະມັຕຕັສສະ ຍະໂສພິວັທທະຕິ

ຍົດຍ່ອມຈະເຣີນໂດຍຍິ່ງ ແກ່ຄົນຜູ້ມີຄວາມດຸໝັ້ນ ມີສະຕິ ມີການງານ ສະອາດ ມີປົກກະຕິໄຄ່ຄວນ ແລວຈຶ່ງທຳ ສຳລວມແລວ ລ້ຽງຊີວິດໂດຍທຳ ແລະ ບໍ່ປະໝາດ.

ພຣະອາຈານ ມະຫາເຫວດ ມະເສໄນ ເຈົ້າອາວາດ ວັດສີສະເກດ ໄດ້ ຈັດງານສະຫຼອງຜົນສຳເລັດ ໃນການກໍ່ສ້າງສາສະ ນະວັດຖຸມີກູຕິ,ໂຮງຮຽນສອນ ປະຣິຍັດຕິທັມ ຂຶ້ນພາຍໃນວັດ ແລະ ສອນແປງ ສາສະນະສົມບັດ ຕ່າງໆທີ່ເປ ເພ ເພື່ອນຳໃຊ້ ເຂົ້າໃນສາສະນະກິດຕ່າງໆ ນັບວ່າ ເປັນປະໂຫຍດຕໍ່ປະເທດ ຊາດ ແລະພຣະພຸດທະສາສນາ ເປັນຢ່າງຍິ່ງ ພ້ອມດຽວກັນນີ້ ຄະນະນິສິດສານຸສິດ ກໍຈະ ໄດ້ຈັດພິທີເຖຣາພິເສກ ໃຫ້ແກ່ພຣະອາຈານ ທີ່ໄດ້ຮັບປະຣິນຍາ ດຸດສະດີບັນດິດ ກິດຕິມະສັກ (ສາຂາ ພຸດທະສາດ) ຈາກ ມະຫາວິທະຍາໄລ ມະຫາຈຸລາລົງກອນຣາຊວິທະຍາໄລ ແຫ່ງປະເທດໄທ ຖ້າເບິ່ງຕາມຊີວະປະຫວັດ, ການສຶກສາ ການກໍ່ສ້າງ ພາຍໃນວັດ ການທຳກິດຈະວັດ ການຈັດຕັ້ງ ສອນທຳມະກະຖຶກໃຫ້ ແກ່ພຣະສົງສາມະເນນພານໃນວັດ ແລະເທດອົບຣົມຍາດໂຍມວັນສິນຫຼືປາງບຸນ ຕ່າງໆ ພຣະອາຈານມີບົດບາດຕໍ່ສັງຄົມໄດ້ດີຫຼາຍ ການຈັດຕັ້ງໃນອົງການສົ່ງ ຈາກເຈົ້າອາວາດຂຶ້ນໄປຫາຕາແສງ,ເມືອງ,ແຂວງແລະສູນກາງຕາມລຳດັບຈາກຄວາມດຸໝັ້ນ ມີສະຕິປັນຍາຮອບຄອບ ການປະຕິບັດວຽກງານສະອາດ ມີປົກກະຕິກັ່ນກອງຖືກຕ້ອງແລ້ວຈຶ່ງກະທຳ ສຳລວມກາຍ ວາຈາ ໃຈ ໃຫ້ເປັນປົກກະຕິ ການລ້ຽງຊີວິດໂດຍທຳ ແລະບໍ່ປະໝາດ ໄດ້ຮັບການຍ້ອງຍໍຈາກພາຍໃນແລະຕ່າງປະເທດເປັນຢ່າງດີ ໃນນາມສ່ວນຕົວ ຫຼື ໃນນາມອົງການພຸດທະສາສນາສັມພັນແຫ່ງປະເທດລາວ ຂໍສະແດງຄວາມປິຕິຍິນດີ ຕໍ່ຜົນສຳເລັດ ໃນໜ້າທີ່ວຽກງານຂອງ ພຣະອາຈານໂດຍຄຳສຸພາສິດຂອງບູຮານວ່າ:

ຄ່າຂອງຄົນ ຢູ່ທີ່ຜົນຂອງງານ
ຄາຂອງງານ ຢູ່ທີ່ການກະທຳ.

ວັດປ່າບ້ານນາຄູນນ້ອຍ ເມືອງນາຊາຍທອງ.ນະຄອນຫຼວງ ວຽງຈັນ
ວັນທີ 25 ມັງກອນ ພ.ສ.2555
ພຣະອາຈານ ດຣ.ຊາລີ ກັນຕະສີໂລ
ຮອງປະທານ ອ.ພ.ສ.ສູນກາງ,
ຫົວໜ້າກຳມາທິການ ເຜີຍແຜ່ສີລະທັມ ແລະກັມມະຖານ
ປະທານໂຄງການ ຄ.ພ.ພ.

# ຄຳອະນຸໂມທະນາ.

ເນື່ອງໃນໂອກາດ ການຈັດພິມປຶ້ມ ຊີວິດແລະຜົນງານຂອງ ພຣະອາຈານ ດຣ. ມະຫາເທວດ ມະເສໄນພ້ອມດ້ວຍ ບົດຝຶກຫັດ ເທດສະໜາ ບົດບັນລະຍາຍທຳ ຂອງເພິ່ນຂຶ້ນເພື່ອເປັນ ການສະ ໜອງ ຕອບ ປະນິທານ, ຄວາມຕັ້ງໃຈ ອັນດີງາມຂອງເພິ່ນຂຶ້ນໃນຄັ້ງນີ້ ເປັນການສະດຸດີ ແລະຮູບປູນຄຸນອັນລ້ຳເລີດຂອງຜູ້ ເປັນສິດ, ເພື່ອເປັນການເຊີດຊູ ຊູອັນກຳລັງໃຈຂອງເພິ່ນໃນຖານະ ໄດ້ສ້າງ ຜົນງານ ອັນກວ້າງໃຫຍ່ໄພສານ ໃຫ້ ແກ່ ພຣະພຸດທະສາສະໜາ ທັງທາງໂລກ ແລະ ທາງທັມ ໄປຄຽງຄູ່ກັນ ຢ່າງບໍ່ຮູ້ ອິດເໝື່ອຍ ເໜື່ອຍລ້າ ແຕ່ປະການໃດ ຫາໄດ້ຍາກ ທີ່ຈະເຮັດໄດ້ຢ່າງເພິ່ນໃນ ຕົວ ຂອງ ຂ້ານ້ອຍ ຈຶ່ງຂໍອະນຸໂມທະນາ ນຳ ກຸດ ແລະຜົນງານ ຂອງ ເພິ່ນ ທີ່ໄດ້ສ້າງແມ່ແບບ ອັນຈົບງາມຂອງ ເພິ່ນໄວ້ໃຫ້ແກ່ ສິດທັງຫຼາຍ ໄດ້ອ່ານ ແລະຮຽນຮູ້ ໃນຈາຣິຍະວັດ ຄວາມນຶກ ຄິດ ທີ່ເປັນຮູບປະທຳ ແລະນາມທຳ ອັນກວ້າງຂວາງຈົນສາມາດໄດ້ ຮັບ ກຽດນິຍົມ ອັນດີງາມ ຈາກລັດຖະບານ ແລະອົງການຊາວພຸດສາກົນ ທີ່ມອບໃຫ້ເພິ່ນ ເປັນ ຂອງຂວັນ ໃນຊີວິດ. ໃນນາມສ່ວນຕົວ ຈຶ່ງຂໍ ອານຸໂມທະນາ ແລະອວຍພອນໃຫ້ ເພິ່ນຈົ່ງເປັນຂວັນໃຈ ແລະເປັນ ຮົ່ມໂພໄຊແກ່ພຸດທະສາສະນິກະຊົນ ຕະຫຼອດໄປ.

ດ້ວຍຄວາມປາຖະໜາດີ  
ຫົວໜ້າ ຫ້ອງການ ອ.ສ.ພ. ສູນກາງ

ພຣະອາຈານ ຄຳມາ ປັນຍາວິຈິດ

# ຄຳອະນຸໂມທະນາ.

ຂອງ

ດຣ. ທອງຄຳ ອອນມະນີສອນ.

ພຣະອາຈານໃຫຍ່ ມະຫາເຫວດ ມະເສໄນ ເປັນພຣະມະຫາເຖຣະອົງ ຊົງສິນ ອັນຜອງໃສ ມີສີລາຈາລະວັດ ອັນຈົບງາມ, ມີ ການປະຕິບັດດີ ປະຕິບັດຊອບ ແລະເປັນພຣະພິກຂຸ ປຸຊະນີຍະບຸກຄົນ ທີ່ຄວນເຄົາລົບບູຊາອົງໜຶ່ງ ໃນສັງຄົມຊາວພຸດ ໂດຍທົ່ວໄປ ໃນປັດຈຸບັນ.

ທ່ານ ເປັນພຣະສົງ ຜູ້ທີ່ມີຄວາມດຸໝັ່ນຂະຫຍັນພຽນ, ຫ້າວຫັນ ວ່ອງໄວ, ອົດທົນທຸ່ນທ່ຽງ, ທັງມີຄວາມໝາຍໝັ້ນຕັ້ງໃຈ ແລະ ປາຖະໜາຢ່າງແຮງກ້າ ອຸທິດເຫື່ອແຮງທາງຮ່າງກາຍ ແລະ ສະຕິປັນຍາ ເພື່ອສືບທອດປົກປັກຮັກສາ ແລະ ອຸປະຖຳຄ້ຳຊູ, ພຣະ ພຸດທະສາສະໜາ. ທ່ານໄດ້ສ້າງຜົນງານໃນການສົ່ງເສີມ ແລະເຜີຍ ແຜ່ ພຸດທະທັມ ຄຳສັ່ງສອນຂອງ ພຣະສັມມາສັມພຸດທະເຈົ້າ ຢ່າງ ມີປະສິດທິພາບ ແລະປະສິດທິຜົນ ຕະຫຼອດມາ. ດ້ວຍແຮງອຸທິດເສຍສະຫຼະ, ແຮງສັດທາ, ສະຕິປັນຍາ, ຄວາມຮູ້ ຄວາມສາມາດ ແລະຄວາມສະຫຼາດ ຫຼັກແຫຼມ. ທ່ານອາຈານໃຫຍ່ ມະຫາເຫວດ ໄດ້ຝາກຜົນງານ ດັ່ງກ່າວມານັ້ນ ໄວ້ປະດັບຊາດ ແລະພຣະພຸດທະສາສະໜາ ດັ່ງທີ່ທ່ານຈະໄດ້ອ່ານໃນປຶ້ມ ເຫຼັ້ມນີ້.

ຜົນງານ ອັນດີເດັ່ນ, ຄຸນງາມຄວາມດີ, ຄວາມກ້າວໜ້າໃນ ໜ້າທີ່ການງານ ໃນການນຳພາ ອ.ສ.ພ. ໃນຖານະເປັນຮອງປະທານ ອ.ສ.ພ.ສູນກາງ ຜູ້ປະຈຳການແລະໃນການນຳພາ ພັດທະນາ ສົ່ງ ເສີມ ຍົກລະດັບ ວິທະຍະຖານະ ແລະບົດບາດການສຶກສາສົງລາວ ໃຫ້ພົ້ນເດັ່ນຂຶ້ນຢ່າງສົມກຽດໃນໄລຍະ ທີ່ຜ່ານມານັ້ນ ໄດ້ຢັ້ງຢືນເຖິງ ຄວາມສຳເລັດ ແລະບຸນຍະປາຣະມີທີ່ພຣະອາຈານໃຫຍ່ ໄດ້ມີ ຄວາມອົດທົນ ແລະວິຣິຍະ ອຸດສາຫະປູກປັ້ນສ້າງສັນຂຶ້ນມາ. ນີ້ຄື ເຫດຜົນແລະພະລະວະປັດໃຈ ອັນສຳຄັນຍິ່ງ ໃນການທີ່ພຣະອາຈານ ໃຫຍ່ ມະຫາເຫວດ ມະເສໄນ ໄດ້ຮັບ ປຣິນຍາ ສະດຸດີ ພຸດທະສາດບັນດິດ ກິດຕິມະສັກ (ສາຂາ ພຸດທະສາດ) ຈາກມະຫາ ວິທະຍາໄລ ມະຫາຈຸລາລົງກອນ ລາຊະວິທະຍາໄລ ແຫ່ງ ລາດຊະອານາຈັກໄທ.

ຂ້ານ້ອຍ ຂໍອະນຸໂມທະນາ ສາທຸການ ດ້ວຍແຮງສັດທາປະສາທະເຫຼື້ອມໃສ ຢ່າງສຸດອົກສຸດໃຈ ຕໍ່ຜົນສຳເລັດ ອັນຊົງກຽດ ແລະສູງຊົ່ງໃນຊີວິດ ແລະຜົນງານທີ່ໜ້າສັນລະເສີນຂອງພຣະອາຈານໃຫຍ່ ມານະໂອກາດນີ້ ດ້ວຍ.

ຂ້ານ້ອຍ ເຊື່ອໝັ້ນວ່າ ແບບຢ່າງອັນດີເລີດ, ຄວາມສຳເລັດ ແລະຄຸນຄ່າ ທາງດ້ານຜົນງານອັນປະເສີດ ຂອງພຣະອາຈານໃຫຍ່ນີ້ ຈະກາຍເປັນແວ່ນແຍງອັນໃສແຈ້ງ, ເປັນຄວາມຫວັງ ແລະເປັນແສງທຽນ ແສງທັມ ສ່ອງທາງໃຫ້

ແກ່ ພຸດທະສາສະນິກະຊົນ ສິດສານຸສິດ ແລະຊາວລາວທຸກຄົນ ຜູ້ທີ່ຈະເຮັດໜ້າທີ່ ເປັນທາຍາດສືບທອດ ພຣະພຸດທະສາສະໜາຕໍ່ໄປ ໃນພາຍພາກໜ້າຢ່າງແນ່ນອນ.

ຂ້ານ້ອຍ ຂໍນ້ອມຂາບຄາລະວະ ຖວາຍຄຳອວຍພອນໄຊອັນປະເສີດແດ່ ພຣະອາຈານໃຫຍ່ ມະຫາເຫວດ ມະເສໄນ ຂໍຈົ່ງປະສົບແຕ່ສຸກກາຍ ສຸກໃຈ ພະລານະໄມສົມບູນ ອາຍຸໝັ້ນຍືນ ໝັ້ນຄົງໃນພຣະພຸດທະສາສະໜາ ໃສສ່ອງ ສະຫງົບເຢັນ ໃນອານຸພາບ ແຫ່ງພຸດທະທັມ ອັນລ້ຳເລີດ ປະເສີດກວ່າສິ່ງທັງປວງ - ເປັນດວງໄຟສະຫວ່າງສະໄຫວ ບໍ່ມີວັນລາໄລ ດັ່ງມອດູເປັນຈັກເທື່ອ ດ້ວຍ ອາຍຸ ວັນນະ ສຸຂະ ແລະພະລະ ຕະຫຼອດໄປ ຂ້ານ້ອຍທອນ!

ປາຣະມີ ທ່ານສ້າງ ບໍ່ຈາງຈືດຈຶ້ມຫາຍ
ບຸນແຜ່ຜາຍຂະຫຍາຍໄປ ທົ່ວໂລກາກວ້າງ
ເຖິງປວງຊົນປະຊາເຊື້ອ ຊາວລາວຊາວໂລກ
ດັບໂສກ ໝົດທຸກຮ້ອນ ອວຍພອນໄຊປະເສີດກົ້ມ
ປະນົມນິ້ວ ນຶກພະຄຸນ ທ່ານແລ້ວ.

ຢູ່ເພື່ອຄົນ ຢູ່ໄດ້ ພຽງຊົ່ວໝົດລົມ.
ຢູ່ເພື່ອ ສັງຄົມຄົນ ຢູ່ນິລັນດອນໝັ້ນ
ຈື່ນເຖິງວັນດິນຟ້າ ສະຫຼາຍລາ ກໍ່ຍັງຢູ່
ຄວາມດີ ຊູຊື່ໄວ້ ໃຜກໍ່ຊົມຊື່ນຍ້ອງ
ສະຫຼອງອ້າງເອີ່ຍນາມ ແທ້ແລ້ວ.

ດ້ວຍຄວາມເຄົາລົບ ແລະນັບຖືຢ່າງສູງ
ບ້ານດົງປ່າແຫຼບ, ວັນທີ 20 ມັງກອນ 2012
ຂ້ານ້ອຍ

ດຣ. ທອງຄຳ ອ່ອນມະນີສອນ

- ອະດີດ ຫົວໜ້າ ກົມວັນນະຄະດີ - ວັດທະນະທຳ ມະຫາຊົນ.
- ສິລະປິນແຫ່ງຊາດ ສາຂາ ວັນນະກຳ.
- ນັກກະວີ ຊີໄຣ.
- ນັກກະວີ ລາງວັນແມ່ນ້ຳຂອງ.



# ສາລະບານ


ຄຳນຳ ໜ້າ

1. ຄຳນຳ 2-8
2. ປະຫວັດ ແລະຜົນງານ
3. ກຽດປະຫວັດ ແລະຜົນງານ
4. ຄູ່ມືເຝິກຫັດ
   - ຫຼັກການເທສນາທົ່ວໄປ
   - ແຍກຕາມຜູ້ເທດ
   - ການເທສນາ ທີ່ຖືກຕ້ອງ
   - ວິທີເຝິກ ການເທດ
   - ວິທີປຸງຄຳເວົ້າ ໃຫ້ສົມບູນ
5. ແບບເຝິກຫັດ ການເປັນນັກເທດ
6. ຕົວຢ່າງ
   - ງານສົບ
   - ງານບວດ
   - ງານບຸນສະຫຼອງ
7. ແບບເຝິກຫັດ ເທສນາ ທີ່ 1 - ເລື່ອງ ການໃຫ້ທານ.
8. ແບບເຝິກຫັດ ເທສນາ ທີ່ 2 - ເລື່ອງ ອະບາຍະມຸກ 4.
   - ໂທດ ຂອງ ອະບາຍະມຸກ 4.
9. ແບບເຝິກຫັດ ເທສນາ ທີ່ 3 - ເລື່ອງ ວັນອາສາຣະຫະບູຊາ.
10. ຕົວຢ່າງ ການເທສນາຈິງ ກັນ ທີ່ 1.
11. ຕົວຢ່າງ ການເທສນາຈິງ ກັນ ທີ່ 2.
    - ຫຼັກການທຳບຸນ 3 ຢ່າງ.
12. ຕົວຢ່າງ ການເທສນາຈິງ ກັນ ທີ່ 3.
    - ການເສຍສະຫຼະ ມີ 2 ຢ່າງ.
13. ຫຼັກການທີ່ດີ ສຳລັບຜູ້ຄອງເຮືອນ ມີ 4 ຢ່າງ.
14. ຫຼັກການສະແດງ ປາຖະກະຖາທັມ.
15. ຫຼັກການສຳຄັນ ຂອງການສະແດງປາຖະກະຖາ
16. ການປາຖະກະຖາ ຕອງນຶກເຖິງສິ່ງຕໍ່ໄປນີ້.
17. ອີກຕົວຢ່າງໜຶ່ງ ການແຕ່ງບົດເທດ.
18. ຕົວຢ່າງ ບົດເທສນາຈິງ ກັນ ທີ 4.
19. ຕົວຢ່າງ ບົດເທສນາຈິງ ກັນ ທີ 5 - ການດຳລົງຊີວິດ

20. ຕົວຢ່າງ ບົດເທສນາຈິງ ກັນ ທີ 6 - ເປັນໄປຕາມກຳ.
21. ຕົວຢ່າງ ບົດເທສນາຈິງ ກັນ ທີ 7 - ສິນ 5.

# ປະຫວັດ ແລະ ຜົນງານ

ພຣະອາຈານ ມະຫາເຫວດ ຈິດຕະກາໂລ (ມະເສໄນ), ປັດຈຸບັນ ອາຍຸ 73 ປີ, 53 ພັນສາ, ປ.ທ 3, ນ.ທ ເອກ, ດຣ. ພຸດທະສາດ ບັນດິດ ກິດຕິມະສັກ, ຮອງປະທານ ຜູ້ປະຈຳການ ສູນກາງອ.ພ.ສ, ທີ່ປຶກສາ ວິທະຍາໄລ ສົງອົງຕື້, ເຈົ້າອະທິການ ວັດສີສະເກດ ເຂດວັດຈັນ, ເມືອງ ຈັນທະບູລີ, ນະຄອນຫລວງ ວຽງຈັນ.

## ສະຖານະເດີມ

ຊື່: ເຫວດ, ສາຍາ: ຈິດຕະກາໂລ, ເປັນລູກ ຂອງ ທ້າວ ສຸລີ ມະເສໄນ ແລະ ນາງດວງ ມະເສໄນ,ຢູ່ບ້ານເຫຼົ່າພັດທະນາ,ເມືອງນາຫວ້າ,ແຂວງນະຄອນ ພະນົມ, ມີ ອ້າຍ - ເອື້ອຍນ້ອງຮ່ວມ ບິດາ-ມານດາ 08 ຄົນ ຄື

1. ທ້າວ ປະເສີດ ມະເສໄນ.
2. ນາງ ເກດແກ້ວ
3. ນາງ ວິເສດ
4. ທ້າວ ປະເທດ ມະເສໄນ.
5. ນາງ ເດດໄທ.
6. ນາງ ກຸຫລາບ.
7. ທ້າວ ດາບ ມະເສໄນ.
8. ທ້າວ ຜາບໄຊ ມະເສໄນ.

## ການສຶກສາຝ່າຍໂລກ

- ປີ 1952 ຮຽນຈົບ ປະຖົມ ບ້ານເຫລົ່າ ພັດທະນາ, ເມືອງ ສີສົງຄາມ, ແຂວງ ນະຄອນພະນົມ.(ທີ່ບ້ານເກີດ)
- ປີ 1960 ຈົບມ3 ທີ່ ໂຮງຮຽນ ວັດມະຫາທາດ ເຊີງຊຸມ, ເມືອງ ສະກົນນະຄອນ, ແຂວງ ສະກົນນະຄອນ.

## ການສຶກສາຝ່າຍທັມ

- ປີພ.ສ 2501 (1958) ອຸປະສົມບົດ ເປັນພຣະພິກຂຸ ຢູ່ວັດບ້ານເຫຼົ່າ ພັດທະນາ ແລະກຳເລີ່ມຮຽນ ນັກທັມໃນປີນັ້ນ, ຈົບນັກທັມ ຊັ້ນຕີ
- ປີພ.ສ 2502 (1959) ຈົບນັກທັມ ຊັ້ນໂທ ທີ່ ສຳນັກວັດ ດອນແດງ ບ້ານ ດອນແດງ ເມືອງສີສົງຄາມ, ແຂວງ ນະຄອນພະນົມ
- ປີພ.ສ 2503 (1960) ຈົບນັກທັມຊັ້ນເອກ ແລະ ປະ ພຣະມະຫາສາມ ປະໂຫຍກ ທີ່ສຳນັກວັດເໜືອ, ເມືອງ ສະກົນນະຄອນ, ແຂວງ ສະກົນນະຄອນ.

## ກຽດປະຫວັດ ແລະຜົນງານ

ຂອງ ພຣະອາຈານ ດຣ. ມະຫາເຫວດ ມະເສໄນ ຮອງປະທານ ຜູ້ປະຈໍາການ ສູນກາງ ອົງການພຸດທະສາດສະໜາ

### ຜົນງານ

- ດ້ານການສຶກສາ ປີ1964 ເປັນ ຄູສອນນັກທັມ-ປາລີ, ທີ່ ວັດທັມມາວາດ ເມືອງ ວານອນນິວາດ, ແຂວງ ສະກົນນະຄອນ.
- ປີ1966 -1974 ພຣະອາຈານ ໄດ້ສອນຢູ່ໂຮງຮຽນ ພຸດທະຍຸວະຊົນ ວັນອາທິດ ທີ່ ສໍານັກວັດສີສະເກດ ວິຊາ: ທັມມະ, ພຸດທະປະຫວັດ, ສາສະນະພິທີ, ວັດທະນະທັມ ແລະ ພາສາອັງກິດ.
- ປີຄ.ສ.1976-78 ເປັນ ຄູສອນປະຊາສຶກສາ ໃຫ້ແກ່ອອກຕົນຍາດໂຍມ ຊາວບ້ານ ຊຽງຍືນ.
- ປີ 1982 ສອນຢູ່ ໂຮງຮຽນສ້າງຄູສົງ ຊັ້ນຕົ້ນ ວັດສະຫວ່າງ ແລະ ຊັ້ນກາງ ວັດອົງຕື້.
- ປີ 1996 ພຣະອາຈານ ແຕ່ງໂຄງຮ່າງຫຼັກສູດ ວິຊາ ທັມມະປະຍຸກ, ວິຊາ ພຣະວິໄນບັນຍັດ, ວິໄນປິດົກ ປີທີ1, ພຣະສູດຕັນຕະປິດົກ ປີທີ 1 ພ້ອມທັງສອນ ໃນວິຊາເຫຼົ່ານີ້ ເປັນເວລາສອງປີ ຢູ່ທີ່ ວິທະຍາໄລສົງອົງຕື້.
- ປີ 2000 ໄດ້ຕັ້ງໂຄງການສອນ ແລະ ຝຶກອົບຮົມ ພຣະທັມມະກະຖຶກ ໃຫ້ ແກ່ພຣະສົງສາມະເນນ ໃນເທສະການເຂົ້າພັນສາ, ນອກຈາກນັ້ນ ພຣະອາຈານ ຍັງໄດ້ໄປເທສະໜາ ໃຫ້ອອກຕົນຍາດໂຍມ ຟັງໃນງານບຸນ ຕ່າງໆ ຕາມກາລະໂອກາດ, ແຕ່ສ່ວນຫລາຍແລ້ວ ຍາມກາງພັນສາ ພຣະສົງ ມີການທໍາກິດຈະກໍາຮ່ວມກັນ (ສັງຄະກັມ) ຢູ່ໃນນະຄອນຫລວງ ຈະໂຮມກັນແຕ່ລະເມືອງ ແລະແຕ່ລະສິມ ຈະໄດ້ໝູນວຽນປ່ຽນກັນ ເອົາຕາມທີ່ທາງຄະນະອພສ ເມືອງ ໄດ້ກໍານົດໄວ້ຢູ່ໃນກິດຈະກໍາ ແຕ່ລະເທື່ອນັ້ນ ຈະມີການຟັງເທດກ່ອນ ຈຶ່ງລົງອຸໂປສົດ ໃນການເທດແຕ່ລະສິມນັ້ນ ສ່ວນຫລາຍກໍມີແຕ່ພຣະອາຈານ ເປັນຜູ້ເທດຕາມພາລະໜ້າທີ່ ຈາກ ຄູບາອາຈານໄດ້ ມອບໝາຍໃຫ້ ແຕ່ບາງຄັ້ງ ກໍເປັນອົງເທດ ແທນພຣະອາຈານ ບໍ່ເຄີຍປະຕິເສດ ໃນເມື່ອທາງເຈົ້າພາບນິມົນ ກໍຂຶ້ນທໍທັມມາດໂລດ.

ເວົ້າເລື່ອງການສຶກສາອົບຮົມ ການເຜີຍແຜ່ ພຣະອາຈານແມ່ນເອົາໃຈໃສ່ຈິງຈັງບໍ່ໄດ້ລົດລະໃນກາງພັນສາ ເມື່ອໄຫວ້ພຣະສູດມົນ ແລ້ວທຸກໆມື້ ພຣະອາຈານ ໄດ້ຝຶກຊ້ອມສູດມຸງຄຸນ-ໄຫວ້ພຣະ ເຊົ້າ-ແລງ ໃຫ້ແກ່ພຣະສົງສາມະເນນ ໂດຍໃຫ້ໄດ້ ແລະ ຖືກທີ ຄະສຣະເລື່ອງນີ້ ພຣະອາຈານ ເພິ່ນຈະເອົາ ໃຈໃສ່ເປັນພິເສດເລື່ອງການສູດ ການເທດ ການສຶກສາພຣະເນນ ທີ່ມາຢູ່ໃນວັດສີສະເກດ ຈະຕ້ອງໄດ້ຮຽນທັງສອງວິຊາ ໝາຍວ່າຮຽນວິຊາການ ຈາກ

ໂຮງຮຽນແລ້ວ ຍັງຈະຕ້ອງໄດ້ ຮຽນຮູ້ການຝຶກຕົນ ຄື ແບບແຜນວິທີເຮັດວຽກ ແລະຫຼັກຈະຣິຍະວັດ ຂອງ ພຣະ-ເນນ ໃນການສູດ-ເທດ ໃຫ້ຖືກຕາມ ຫຼັກພຸດທະທັມ ແລະ ວັດທະນະທັມ ແລະໄດ້ໄປເຄື່ອນໄຫວທັງພາຍໃນແລະຕ່າງປະເທດ ກໍຫລາຍໆປະເທດທີ່ໄດ້ຖືກແຕ່ງຕັ້ງໄປນຳຄະນະ.

## ຕຳແໜງ-ໜ້າທີ່

- ປີ 1980 ຖືກແຕ່ງຕັ້ງ ໃຫ້ເປັນ ປະທານຄະນະ ພ.ສ.ລ (ອ.ພ.ສ), ຕາແສງວັດຈັນ.
- ປີ 1983 ໄດ້ຖືກແຕ່ງຕັ້ງ ໃຫ້ເປັນ ເຈົ້າອະທິການ ວັດສີສະເກດ.
- ປ 1985 ເປັນຄະນະ ອ.ພ.ສ ເມືອງຈັນທະບູລີ.
- ປີ 1996 ເປັນ ຜູ້ຮອງອຳນວຍການ ວິທະຍາໄລສົງອົງຕື້, ຝ່າຍກິດຈະການນັກສຶກສາ
- ປີ 1998 ເປັນ ຮອງຫົວໜ້າກຳມາທິການ ເຜີຍແຜ່ສິລະທັມ ແລະ ວິປັດສະນາ ກຳມະຖານສູນກາງ ອ.ພ.ສ.
- ປີ 2005 ເປັນ ຜູ້ອຳນວຍການ ວິທະຍາໄລສົງອົງຕື້
- ປີ 2008 ເປັນ ທີ່ປຶກສາ ຂອງ ວິທະຍາໄລສົງອົງຕື້.
- ປີ 2010 ເປັນ ຮອງປະທານ ຜູ້ປະຈຳການສູນກາງ ອ.ພ.ສ.

## ການສ້າງສາພັດທະນາ ສາສະນະວັດຖຸ

1. ໄດ້ສ້າງ ກຸຕິ 2 ຊັ້ນ 06 ຫ້ອງສຳລັບເປັນທີ່ພັກ ຂອງພຣະສົງ ສຳມະເນນ.
2. ໄດສາງ ກຸຕິ 2 ຊັ້ນ 06 ຫ້ອງ ສຳລັບເປັນທີ່ພັກເຊົາ ຂອງພຣະອາຄັນຕຸກະ ແລະ ພຣະເນນບວດ 7, 9, 15 ວັນ,1 ເດືອນ ແລະ 3ເດືອນ.
3. ໄດ້ສ້າງ ຫໍພຣະປະທານ ແລະ ພຣະພຸດທະຮູບປາງຕາງໆ.
4. ໄດ້ສ້າງ ຫໍກອງ 01 ຫຼັງ.
5. ໄດ້ປູລະນະສ້ອມແປງ ສາລາເກົ່າ ໃຫ້ດີຂຶ້ນ.
6. ໄດ້ຕໍ່ເຕີມ ກຸຕິເກົ່າ ຂຶ້ນຫລາຍຫ້ອງ.
7. ໄດ້ສ້າງ ຫ້ອງນ້ຳ ສາທາລະນະ ຊາຍ - ຍິງ ປະຈຳວັດ.
8. ໄດສ້ອມແປງ ຫ້ອງການ, ຫ້ອງປະຊຸມ ແລະ ຫ້ອງນ້ຳ ຂອງ ວິທະຍາໄລສົງອົງຕື້.
9. ໄດ້ສ້າງ ໂຮງຮຽນປະຣິຍັດຕິທັມ ແລະ ກຸຕິ 3 ຊັ້ນ.
10. ໄດສາງ ກຸຕິອະເນກປະສົງ 1 ຫລັງ 2 ຊັ້ນ.



ກຸຕິ 2 ຊັ້ນ 6 ຫອງ ສຳລັບເປັນທີ່ພັກເຊົາ ຂອງ ພຣະອາຄັນຕຸກະ ແລະ ພຣະເນນບວດ 7, 9,15 ວັນ,1 ເດືອນ ແລະ 3 ເດືອນ.ເລີ່ມສ້າງ ວັນທີ 5 ເດືອນມັງກອນ 2005. ສ້າງສຳເລັດ 28 /4 /2006.



ຫໍພຣະປະທານ ແລະ ພຣະພຸດທະຮູບປາງຕ່າງໆ. ສ້າງ ປີ 2003

24 / VII



ຫໍກອງ.ສ້າງໃນປີ2004

# ຂໍໂທດຫຼາຍໆ



ປຶ້ມຫົວດັ່ງກ່າວ ຍັງບໍ່ສາມາດນຳ
ມາເຜີຍແຜ່ໄດ້ ເນື່ອງຈາກຍັງບໍ່
ໄດ້ຮັບການອະນຸຍາດໃຫ້ເຜີຍແຜ່
ໄດ້ຢ່າງເປັນທາງການເທື່ອ...

ດ້ວຍຄວາມຮັກແພງ